# ຄວາມຄ່ອງແຄ້ວ ເປັນກຸນແຈສຳຄັນໃນເວລາແກ້ໄຂຄວາມຫຍຸ້ງຍາກ

ລບຕ ເປັນຄຳທີ່ຫຍໍ້ມາຈາກ ລະເບີດບໍ່ທັນແຕກ ເຊິ່ງເປັນຄຳສັບທີ່ຮູ້ຈັກກັນດີ ຢູ່ ສປປ ລາວ. ໜຶ່ງສ່ວນສາມຂອງລະເບີດລູກຫວ່ານທີ່ຖືກຖິ້ມໃສ່ຜືນແຜ່ນດິນລາວນັບແຕ່ປີ 1964 ຫາປີ 1973 ນັ້ນ ແມ່ນຍັງບໍ່ທັນແຕກ ເຊິ່ງກໍ່ໃຫ້ເກີດຄວາມສ່ຽງເປັນເວລາຫຼາຍທົດສະວັດຕໍ່ມາຈົນຮອດທຸກມື້ນີ້. ຢູ່ໃນ 4 ບ້ານ ຈະມີບ້ານໜຶ່ງທີ່ມີຄວາມສ່ຽງຕໍ່ກັບລະເບີດບໍ່ທັນແຕກ ແລະ ກໍມີບາງແຂວງທີ່ໄດ້ຮັບຜົນກະທົບຫຼາຍກວ່າແຂວງອື່ນໆ.

ໂດຍສະເພາະຢູ່ເຂດຊົນນະບົດ, ຊາວບ້ານຕ້ອງໄດ້ລະມັດລະວັງທຸກບ່ອນທີ່ພວກເຂົາຍ່າງ, ຫຼິ້ນ ຫຼື ແຕ່ງຢູ່ຄົວກິນ. ຊາວນາບໍ່ສາມາດເຮັດນາໄດ້ຢ່າງເຕັມສ່ວນ ເນື່ອງຈາກຄວາມຢ້ານກົວຕໍ່ລະເບີດບໍ່ທັນແຕກໃນພື້ນທີ່ນາຂອງພວກເຂົາເຈົ້າ. ຄວາມບໍ່ປອດໄພດັ່ງກ່າວ ຂັດຂວາງການທຳມາຫາກິນຂອງປະຊາຊົນ ແລະ ສົ່ງຜົນກະທົບຕໍ່ເສດຖະກິດຂອງປະເທດ. ລະເບີດບໍ່ທັນແຕກເປັນອຸປະສັກທີ່ໃຫຍ່ຫຼວງຕໍ່ກັບການພັດທະນາສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ.

ບັນຫາທີ່ເປັນທີ່ຮູ້ຈັກກັນດີນີ້ ສາມາດເຮັດໃຫ້ສະຖານະການຮຸນແຮງຂຶ້ນກວ່າເກົ່າ ໃນເວລາທີ່ຮູບແບບຂອງສະພາບອາກາດມີການປ່ຽນແປງ ອັນເກີດມາຈາກການປ່ຽນແປງຂອງສະພາບດິນຟ້າອາກາດໃນປະຈຸບັນ. ປີນີ້, ນໍ້າຖ້ວມສຸກຳລັງສ້າງຄວາມເສຍຫາຍຢ່າງໜັກໜ່ວງຢູ່ທາງພາກເໜືອ ແລະ ພາກໃຕ້ຂອງລາວ ເຊິ່ງເຫດການສຸກເສີນລະດັບຊາດປີກາຍນີ້ຍັງຢູ່ໃນຄວາມຊົງຈຳຂອງພວກເຮົາ. ເມື່ອກະແສນໍ້າໄຫຼຜ່ານ ແລະ ມີມວນນໍ້າມະຫາສານ ໄດ້ພັດທຸກເອົາທຸກຢ່າງທີ່ຢູ່ເທິງໜ້າດິນ ໂດຍບໍ່ສົນວ່າຈະມີຂະໜາດ, ນໍ້າໜັກ ຫຼື ອົງປະກອບແນວໃດ, ພັດເອົາທັງຄົນ, ສັດ ແລະ ສິ່ງທີ່ເປັນພື້ນຖານການດຳລົງຊີວິດຂອງປະຊາຊົນ.

ນໍ້າຖ້ວມສາມາດເຮັດໃຫ້ລະເບີດບໍ່ທັນແຕກມີການເຄື່ອນຍ້າຍໄດ້ງ່າຍ ເຊິ່ງນໍ້າດັ່ງກ່າວຈະພັດເອົາລະເບີດບໍ່ແຕກຈາກສະຖານທີ່ແຫ່ງໜຶ່ງ ໄປສະຖານທີ່ແຫ່ງໃໝ່ທີ່ກ່ອນໜ້ານີ້ມີຄວາມປອດໄພທີ່ມີການເກັບກູ້ ແລະ ການສຳຫລວດແລ້ວ. ໃນກໍລະນີດັ່ງກ່າວ, ການຟື້ນຟູຈະຕ້ອງໄດ້ມີການສຳຫຼວດ ແລະ ເກັບກູ້ຢ່າງວ່ອງໄວ ແລະ ຄ່ອງແຄ້ວ ຫຼື ຢ່າງໜ້ອຍ ກໍເຮັດກິດຈະກ□າໂຄສະນາສຶກສາຄວາມສ່ຽງໃຫ້ແກ່ຊາວບ້ານ.

ເຖິງແມ່ນວ່າຈະມີຫຼາຍພາກສ່ວນໃນຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ, ມາຮອດປະຈຸບັນ, ສປປ ລາວ ແລະ ຄູ່ຮ່ວມພັດທະນາ ຍັງມີຄວາມທ້າທາຍໃນການເກັບກູ້ລະເບີດບໍ່ທັນແຕກທັງໝົດອອກຈາກປະເທດ. ການສຳຫຼວດຢ່າງລະອຽດເປັນສິ່ງຈຳເປັນ ເພື່ອປະເມີນວ່າລະເບີດບໍ່ທັນແຕກໃນປະຈຸບັນມີການເຄື່ອນຍ້າຍເນື່ອງຈາກນໍ້າຖ້ວມຫຼືບໍ່. ຂະບວນການສຳຫຼວດ ແລະ ເກັບກູ້ນັ້ນຕ້ອງໄດ້ໃຊ້ແຮງງານ ແລະ ງົບປະມານຈຳນວນຫຼາຍ ແລະ ມັນເກືອບເປັນໄປບໍ່ໄດ້ທີ່ຈະປະເມີນວ່າ ເມື່ອໃດລະເບີດບໍ່ທັນແຕກທັງໝົດຈະຖືກລົບລ້າງຈາກຜືນແຜ່ນດິນລາວ.

ສິ່ງສຳຄັນກວ່ານັ້ນກໍຄື ການມີຄູ່ຮ່ວມມືທີ່ຕ້ອງການຈະເຂົ້າມາທີສ່ວນຮ່ວມທີ່ໄວວາ ແລະ ບໍ່ເປັນໄປຕາມລະບົບລັດຖະການໂດຍສະເພາະໃນເວລາເກີດເຫດວິກິດການ ຫຼື ຫຼັງວິກິດການທັນທີທັນໃດ. ຕົວຢ່າງ, ລັດຖະບານປະເທດອິດສະຕາລີ ໄດ້ສະໜອງທຶນຢ່າງໄວວາ ເພື່ອສະໜັບສະໜູນທີມເກັບກູ້ລະເບີດບໍ່ທັນແຕກຫຼາຍທີມ ເພື່ອແນໃສ່ຮັບປະກັນຄວາມປອດໄພຂອງປະຊາຊົນທີ່ຖືກຍົກຍ້າຍຖິ່ນຖານພູມລຳ ຢູ່ແຂວງອັດຕະປື ພາຍຫຼັງຖືກນໍ້າຖ້ວມ ໃນປີ 2018. ອົງການສະຫະປະຊາຊາດ ເພື່ອການພັດທະນາ (ຢູເອັນດີພີ) ໄດ້ມີສ່ວນຮ່ວມໃນຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ ຢູ່ ສປປ ລາວ ມາຕັ້ງປີ 1996 ໂດຍການເຮັດວຽກຮ່ວມກັບຫຼາຍຄູ່ຮ່ວມພັດທະນາ ທີ່ເຫັນຄວາມສຳຄັນຂອງການປະກອບສ່ວນຢຸດຕິສິ່ງເສດເຫຼືອຈາກສົງຄາມຢູ່ໃນ ສປປ ລາວ.

ຜູ້ໃຫ້ທຶນຈຳນວນໜຶ່ງກໍສະໜອງທຶນແບບ "ຈັດສັນຮີບດ່ວນ" ຊຶ່ງສາມາດນຳໃຊ້ຢ່າງວ່ອງໄວໃນສ່ວນທີ່ມີຊ່ອງຫວ່າງ ແລະ ຂາດແຄນທຶນ ໂດຍທີ່ບໍ່ຜູກຕິດກັບກິດຈະກຳ ຫຼື ຂົງເຂດສະເພາະໃດໜຶ່ງ. ໃນປະຈຸບັນນີ້, ປະເທດລຸກຊຳບວກ ແລະ ໄອແລນ ກໍໄດ້ສະໜອງທຶນໃນຮູບແບບດັ່ງກ່າວທີ່ສູງເຖິງ 3 ລ້ານໂດລາສະຫະລັດ ໃນໄລຍະ 4 ປີ. ທຶນທີ່ບໍ່ຜູກຕິດກັບກິດຈະກຳສະເພາະໃດໜຶ່ງ ເຮັດໃຫ້ອົງການຢູເອັນດີພີ ສາມາດມີສ່ວນຮ່ວມຄະນະກຳມະການແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງຢູ່ ສປປ ລາວ ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ ໂດຍບໍ່ຊັກຊ້າ ໃນການຊ່ວຍປະຊາຊົນໂດຍກົງ ແລະ ສະໜັບສະໜູນອຳນາດການປົກຄອງທີ່ກຳລັງໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກ ແລະ ປະຊາຊົນທີ່ມີ

ຄວາມອ່ອນໄຫວ-ບອບບາງທີ່ຢູ່ໃນພື້ນທີ່ສ່ຽງໄພ. ໃນເວລາທີ່ທຶນການຊ່ວຍເຫຼືອກໍາລັງຫຼຸດໜ້ອຍລົງ ແລະ ຂັ້ນຕອນການສະເໜີຂໍທຶນໃຊ້ເວລາດົນ, ການຈັດສັນທຶນ ເປັນສິ່ງທີ່ຈໍາເປັນຫຼາຍ ເພື່ອທີ່ຈະເຮັດໃຫ້ຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກໄດ້ດໍາເນີນງານຢ່າງຄ່ອງແຄ້ວ ແລະ ທ້າວທັນ ຕໍ່ກັບການປ່ຽນແປງ ແລະ ສະພາບທີ່ເອີ້ນວ່າຊ໊ອກ.

ເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ທີ່ຕື່ມໃສ່ເປົ້າໝາຍການພັດທະນາແບບຍືນຍົງ (ປພຍ) ຂອງໂລກ 17 ເປົ້າໝາຍ ເຊິ່ງເອີ້ນວ່າ ປພຍ 18: ຊີວິດທີປອດໄພຈາກລະເບີດບໍ່ທັນແຕກ ນັ້ນ ເປັນຄໍາໝາຍໝັ້ນໜຶ່ງຂອງປະເທດທີ່ຈະຢຸດຕິບັນຫາລະເບີດລູກຫວ່ານ ພາຍໃນປີ 2030. ສປປ ລາວ ພ້ອມກັບຄູ່ຮ່ວມພັດທະນາໄດ້ເຮັດໃຫ້ຊາວໂລກຮັບຮູ້ເປົ້າໝາຍການພັດທະນາແບບຍືນຍົງ ທີ 18 ແລະ ຫຼຸດຈໍານວນຜົນກະທົບຈາກລະເບີດບໍ່ທັນແຕກ ທີ່ມີຕໍ່ຊີວິດໄດ້ເທື່ອລະກ້າວ. ອັດຕາການບາດເຈັບ ແລະ ເສຍຊີວິດ ແມ່ນຢູ່ໃນລະດັບທີ່ຕໍ່າລົງ ຄື: ແຕ່ປີ 1964 ຫາ ປີ 2012, ມີຄົນເກືອບ 1,000 ຄົນ ທີ່ຕົກເປັນຜູ້ຖືກເຄາະຮ້າຍຈາກ ລບຕ ໃນແຕ່ລະປີ. ປີກາຍນີ້, ມີຈໍານວນຜູ້ຖືກເຄາະຮ້າຍ 24 ຄົນ. ໃນຕໍ່ໜ້າ ຈະພະຍາຍາມເຮັດຕົວເລກດັ່ງກ່າວຫຼຸດລົງເປັນສູນ, ທ່າມກາງສະພາບອາກາດທີ່ປ່ຽນແປງເລື້ອຍໆທີ່ຍາກຈະຄາດຄະເນນັ້ນ, ມັນຍິ່ງມີຄວາມສໍາຄັນຫຼາຍທີ່ຈະຕ້ອງໄດ້ຮ່ວມມືກັນ, ສະໜອງທຶນ ແລະ ຄວາມຊໍານິຊໍານານຢ່າງສຸດຄວາມສາມາດ ແລະ ວ່ອງໄວໃນສະຖານະການທີ່ມີຄວາມຫຍຸ້ງຍາກ. ດ້ວຍການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາຄື ລຸກຊໍາບວກ ແລະ ໄອແລນ, ອົງການຢູເອັນດີພີ ຈະສາມາດປະຕິບັດຄໍາໝາຍໝັ້ນທີ່ວ່າ “ບໍ່ຖິ້ມໃຜໄວ້ເບື້ອງຫຼັງ”.

*ຂຽນໂດຍ*

*ຣິຄາຣດາ ຣິເອເຈີ, ຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈໍາ ສປປ ລາວ*

*ທັດສະນະທີ່ຂຽນລົງໃນບົດຄວາມນີ້ ເປັນຂອງຜູ້ຂຽນຝ່າຍດຽວ ເຊິ່ງບໍ່ແມ່ນທັດສະນະຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ*